ສາລະບານ


ມະຕິຕົກລົງ .......... 3

ລັດຖະດຳລັດ .......... 4

ກົດໝາຍ ວ່າດ້ວຍ ການຈະລາຈອນທາງບົກ .......... 5

ໝວດທີ I ບົດບັນຍັດທົ່ວໄປ .......... 5

ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ .......... 5

ມາດຕາ 2. ນິຍາມຄຳສັບ .......... 5

ມາດຕາ 3. ການສົ່ງເສີມການພັດທະນາລະບົບການຈະລາຈອນທາງບົກ .......... 6

ມາດຕາ 4. ພັນທະຂອງຜູ້ສັນຈອນ .......... 6

ໝວດທີ II ລະບຽບການຈະລາຈອນຕາມເສັ້ນທາງ .......... 6

ມາດຕາ 5. ລະບຽບການທົ່ວໄປ .......... 6

ມາດຕາ 6. ເຈົ້າໜ້າທີ່ຄວບຄຸມການຈະລາຈອນ .......... 6

ມາດຕາ 7. ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ .......... 7

ມາດຕາ 8. ຍານພາຫະນະທີ່ບໍ່ແລ່ນດ້ວຍເຄື່ອງຈັກ .......... 7

ມາດຕາ 9. ສັດລ້ຽງ .......... 8

ໝວດທີ III ຜູ້ຂັບຂີ່ຍານພາຫະນະ .......... 8

ມາດຕາ 10. ອາຍຸຂອງຜູ້ຂັບຂີ່ລົດ .......... 8

ມາດຕາ 11. ໃບຂັບຂີ່ .......... 8

ມາດຕາ 12. ເງື່ອນໄຂຂອງຜູ້ຂັບຂີ່ .......... 8

ມາດຕາ 13. ລະບຽບການຂັບຂີ່ ແລະ ການບັນທຸກ .......... 9

ໝວດທີ IV ການຄຸ້ມຄອງຍານພາຫະນະ .......... 9

ມາດຕາ 14. ການຂຶ້ນທະບຽນ ຍານພາຫະນະຂອງພົນລະເຮືອນ .......... 9

ມາດຕາ 15. ການຂຶ້ນທະບຽນຍານພາຫະນະຂອງກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ .......... 10

ມາດຕາ16. ການນຳເຂົ້າຍານພາຫະນະ .......... 10

ມາດຕາ 17. ການປະກອບ ແລະ ການດັດແປງຍານພາຫະນະ .......... 10

ມາດຕາ 18. ການສ້ອມແປງ ຍານພາຫະນະ .......... 10

ມາດຕາ 19. ການກວດກາ ສະພາບເຕັກນິກຂອງຍານພາຫະນະ .......... 10

ມາດຕາ 20. ການຍົກຍ້າຍ ພາຫະນະກົນຈັກໜັກ .......... 10

ໝວດທີ V ການຄຸ້ມຄອງຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ .......... 11

ມາດຕາ 21. ການຄຸ້ມຄອງຕຳຫລວດ ທາງຫລວງ ແລະ ຕຳຫລວດຈະລາຈອນ .......... 11

ມາດຕາ 22. ການຄຸ້ມຄອງຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ .......... 11

ມາດຕາ 23. ການຄຸ້ມຄອງຂອງກະຊວງພາຍໃນ .......... 11

ໝວດທີ VI ການຄວບຄຸມ ການຈະລາຈອນ .......... 11

ມາດຕາ 24. ສິດ ແລະ ໜ້າທີ່ຂອງຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ .......... 11

ມາດຕາ 25. ສິດ ແລະ ຫນ້າທີ່ຂອງເຈົ້າຫນ້າທີ່ກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ....12
ມາດຕາ 26. ການກວດກາ ແລະ ການແກ້ໄຂອຸປະຕິເຫດ ........................................................12
ມາດຕາ 27. ການກວດກາເອກະສານ ແລະ ກວດກາ ຜູ້ຂັບຂີ່ ..................................................12
ຫມວດທີ VII ການຄຸ້ມຄອງ ການຈະລາຈອນທາງບົກ.................................................................12
ມາດຕາ 28. ອົງການຄຸ້ມຄອງການຈະລາຈອນທາງບົກ ..........................................................12
ມາດຕາ 29. ສິດ ແລະ ຫນ້າທີ່ຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ....................13
ມາດຕາ 30. ສິດ ແລະ ໜ້າທີ່ຂອງກະຊວງພາຍໃນ .................................................................13
ມາດຕາ 31. ສິດ ແລະ ຫນ້າທີ່ ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ..................13
ມາດຕາ 32. ສິດ ແລະ ຫນ້າທີ່ຂອງຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເມືອງ .........14
ຫມວດທີ VIII ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ........................................15
ມາດຕາ 33. ນະໂຍບາຍ ຕໍ່ຜູ້ມີຜົນງານ .............................................................................15
ມາດຕາ34.  ມາດຕະການ ຕໍ່ຜູ້ລະເມີດ .............................................................................15
ມາດຕາ 35. ມາດຕະການ ສຶກສາອົບຮົມ ...........................................................................15
ມາດຕາ 36. ມາດຕະການປັບໃຫມ.....................................................................................15
ມາດຕາ 37. ມາດຕະການທາງອາຍາ ..................................................................................16
ມາດຕາ 38. ມາດຕະການໂທດເພີ້ມ ..................................................................................16
ຫມວດທີ IX ບົດບັນຍັດສຸດທ້າຍ .........................................................................................16
ມາດຕາ 39. ການຈັດຕັ້ງປະຕິບັດ .....................................................................................16
ມາດຕາ 40. ຜົນສັກສິດ ................................................................................................17

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ເລກທີ 02/ສພຊ

ວຽງຈັນ, ວັນທີ 8 ເມສາ 2000

# ມະຕິຕົກລົງ

**ຂອງສະພາແຫ່ງຊາດແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການຕົກລົງຮັບຮອງເອົາກົດຫມາຍວ່າດ້ວຍການຈະລາຈອນທາງບົກ

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດຫມາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເຫນີຂອງນາຍົກລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 17 ມີນາ 2000.

ພາຍຫລັງທີ່ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງກ່ຽວກັບເນື້ອໃນຂອງກົດຫມາຍວ່າດ້ວຍ ການຈະລາຈອນທາງບົກ ໃນກອງປະຊຸມສະໄຫມສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IV, ໃນວາລະປະຊຸມຕອນບ່າຍຂອງວັນທີ 7 ເມສາ 2000.

ກອງປະຊຸມໄດ້ຕົກລົງ:

ມາດຕາ 1: ຮັບຮອງເອົາກົດຫມາຍ ວ່າດ້ວຍການຈະລາຈອນທາງບົກດ້ວຍຄະແນນສຽງສ່ວນຫຼາຍເຫັນດີ.

ມາດຕາ 2: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ປະທານສະພາແຫ່ງຊາດ

ສະຫມານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 12 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດ ໃຊ້ກົດໝາຍວ່າດ້ວຍການຈະລາຈອນທາງບົກ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໝວດທີ່ V, ມາດຕາ 53, ຂໍ້ 1,
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 8 ເມສາ 2000 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຈະລາຈອນທາງບົກ.
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 17 ເມສາ 2000.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ.

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ.
ມາດຕາ 2: ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 22 ພຶດສະພາ 2000
ປະທານປະເທດ ແຫ່ງ ສປປ ລາວ
ຄຳໄຕ ສີພັນດອນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 02/ສພຊ
ວຽງຈັນ, ວັນທີ 8 ເມສາ 2000

# ກົດໝາຍ ວ່າດ້ວຍ ການຈະລາຈອນທາງບົກ

## ໝວດທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ

ກົດໝາຍວ່າດ້ວຍການຈະລາຈອນທາງບົກ ມີໜ້າທີ່ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງການຈະລາຈອນທາງບົກ ເພື່ອອຳນວຍຄວບຄຸມການເຄື່ອນໄຫວໄປ-ມາຂອງຄົນ ແລະ ການນຳໃຊ້ຍານພາຫະນະຊະນິດຕ່າງໆ ຕາມເສັ້ນທາງ ຄົມມະນາຄົມຂົນສົ່ງທາງບົກໃຫ້ມີຄວາມສະດວກ, ມີຄວາມປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ປະກອບສ່ວນ ເຂົ້າໃນການປົກປັກຮັກສາ, ບູລະນະເສັ້ນທາງ, ສິ່ງແວດລ້ອມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໃນການຕິດຕໍ່ກັບສາກົນ.

### ມາດຕາ 2. ນິຍາມຄຳສັບ

1. "ການຈະລາຈອນທາງບົກ" ແມ່ນການສັນຈອນໄປ-ມາຂອງຄົນ ຫລື ການນຳໃຊ້ຍານພາຫະນະຊະນິດຕ່າງໆ ຕາມເສັ້ນທາງຄົມມະນາຄົມຂົນສົ່ງທາງບົກຢູ່ພາຍໃນປະເທດ.

2. "ກົດລະບຽບການຈະລາຈອນ" ແມ່ນລະບຽບການລະອຽດທີ່ບັງຄັບໃຫ້ຜູ້ສັນຈອນໄປ-ມາຕາມເສັ້ນ ທາງປະຕິບັດຕາມຢ່າງເຂັ້ມງວດ.

3. "ລະບົບສັນຍານການຈະລາຈອນ" ແມ່ນປ້າຍການຈະລາຈອນ, ການສັນຍານຈະລາຈອນ, ເຄື່ອງໝາຍການຈະລາຈອນ.

- "ປ້າຍການຈະລາຈອນ" ແມ່ນເຄື່ອງໝາຍຊີ້ບອກ ການປະຕິບັດລະບຽບການຈະລາຈອນຕາມເສັ້ນທາງ.
- "ການສັນຍານຈະລາຈອນ" ແມ່ນການຊີ້ບອກລະບຽບການຈະລາຈອນຕາມເສັ້ນທາງດ້ວຍແສງ, ສີ, ສຽງ, ຄົນ ຫລື ຫຸ່ນຈຳລອງ.

- "ເຄື່ອງໝາຍການຈະລາຈອນ" ແມ່ນເຄື່ອງໝາຍຕ່າງໆທີ່ຕິດຕັ້ງ, ຂີດ, ຂຽນ,ແຕ້ມໄວ້ຕາມໜ້າທາງ, ບ່າທາງ, ແຄມທາງ, ເທິງທາງ ເພື່ອເຕືອນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈະລາຈອນ.

### ມາດຕາ 3. ການສົ່ງເສີມການພັດທະນາລະບົບການຈະລາຈອນທາງບົກ

ລັດສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນໃນການພັດທະນາ, ການກໍ່ສ້າງ, ການບູລະນະ, ການຕິດຕັ້ງ ແລະ ການປົກປັກຮັກສາລະບົບການຈະລາຈອນທາງບົກດ້ວຍນະໂຍບາຍທີ່ເໝາະສົມ.

### ມາດຕາ 4. ພັນທະຂອງຜູ້ສັນຈອນ

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດທຸກຄົນ ທີ່ສັນຈອນໄປມາຕາມເສັ້ນທາງຢູ່ໃນດິນແດນ ສ ປປ ລາວ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດລະບຽບການຈະລາຈອນຢ່າງເຂັ້ມງວດ ແລະ ມີພັນທະປະກອບສ່ວນໃນການປົກປັກຮັກສາບູລະນະເສັ້ນທາງ.

## ໝວດທີ II ລະບຽບການຈະລາຈອນຕາມເສັ້ນທາງ

### ມາດຕາ 5. ລະບຽບການທົ່ວໄປ

ການຈະລາຈອນຕາມເສັ້ນທາງໃນ ສ ປປ ລາວ ແມ່ນໃຫ້ໃຊ້ກ້ຳຂວາ. ຜູ້ນຳໃຊ້ເສັ້ນທາງຕ້ອງປະຕິບັດຕາມກົດຫມາຍວ່າດ້ວຍ ການຈະລາຈອນທາງບົກ ແລະ ກົດລະບຽບການຈະລາຈອນຢ່າງເຂັ້ມງວດ. ຫ້າມບຸກຄົນ ຫລື ການຈັດຕັ້ງສ້າງສິ່ງກີດຂວາງ ຫລື ສິ່ງທີ່ອາດຈະພາໃຫ້ເກີດອຸປະຕິເຫດ, ທຳລາຍຊັບສົມບັດ ສາທາລະນະ ຫລື ລະບົບສັນຍານການຈະລາຈອນຕ່າງໆ ຕາມເສັ້ນທາງ.

ລະບຽບການຈະລາຈອນຕາມເສັ້ນທາງ ຕ້ອງໄດ້ຈັດເຂົ້າໃນຫລັກສູດການຮຽນ-ການສອນໃນແຕ່ລະຊັ້ນຮຽນຕາມຄວາມເຫມາະສົມ.

### ມາດຕາ 6. ເຈົ້າຫນ້າທີ່ຄວບຄຸມການຈະລາຈອນ

ເຈົ້າຫນ້າທີ່ຄວບຄຸມການຈະລາຈອນຕາມເສັ້ນທາງປະກອບດ້ວຍ:

1. ຕຳຫລວດທາງຫລວງ ຊຶ່ງມີຫນ້າທີ່ກວດກາການຂົນສົ່ງທາງບົກຕາມເສັ້ນທາງຫລວງ;
2. ຕຳຫລວດຈະລາຈອນ ຊຶ່ງມີຫນ້າທີ່ອຳນວຍຄວາມສະດວກ ແລະ ຄວບຄຸມການຈະລາຈອນຢູ່ໃນຕົວເມືອງ ຫລື ເທດສະບານ;
3. ຜູ້ທີ່ຖືກມອບຫມາຍຈາກທາງການ.

ໃນເວລາປະຕິບັດ ຫນ້າທີ່ເຈົ້າຫນ້າທີ່ຄວບຄຸມການຈະລາຈອນ ຕ້ອງນຸ່ງເຄື່ອງແບບ, ຕິດເຄື່ອງຫມາຍ, ປະຈຳການຢູ່ບ່ອນທີ່ແນມເຫັນໄດ້ງ່າຍ ແລະ ມີທ່າທີສຸພາບ.

ໃນກໍລະນີຢູ່ຕອນທາງໃດໜຶ່ງຫາກມີການສັນຈອນສັບສົນ, ມີສິ່ງກີດຂວາງ, ມີອຸປະຕິເຫດ ຫລື ມີການສັນຈອນພິເສດ ເຈົ້າໜ້າທີ່ຄວບຄຸມການຈະລາຈອນຕ້ອງແກ້ໄຂຢ່າງທັນການ. ການຊີ້ບອກ, ການເຕືອນ ແລະ ການແນະນຳຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນມີອຳນາດສູງກ່ວາປ້າຍ ແລະ ເຄື່ອງໝາຍການຈະລາຈອນ ທີ່ຕິດຕັ້ງຢູ່ໃນບໍລິເວນນັ້ນຜູ້ສັນຈອນໄປ-ມາຕາມເສັ້ນທາງຕ້ອງປະຕິບັດຕາມການຊີ້ບອກ, ການເຕືອນ ແລະ ການແນະນຳຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນ.

## ມາດຕາ 7. ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ

ຍານພາຫະນະທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ ຕ້ອງມີໂຄງປະກອບສ້າງຖືກຕ້ອງຕາມມາດຕະຖານເຕັກນິກຂອງໂຮງງານທີ່ຜະລິດ ແລະ ລະບຽບການທີ່ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງໄດ້ກຳນົດໄວ້ເຊັ່ນ:

- ມີອຸປະກອນປ້ອງກັນຄວາມປອດໄພ;
- ມີຫ້າມລໍ້;
- ມີໄຟເຍືອງໜ້າ ແລະ ຫລັງ;
- ມີໄຟສັນຍານຄົບຊຸດ;
- ມີແວ່ນສ່ອງຫລັງ;
- ມີແກທີ່ດັງບໍ່ເກີນມາດຕະຖານ;
- ມີທໍ່ອາຍເສຍທີ່ຮັບປະກັນບໍ່ປ່ອຍສຽງດັງ ຫລື ຄັວນດຳເກີນມາດຕະຖານ ຊຶ່ງຈະສ້າງມົນລະພິດຕໍ່ສິ່ງແວດລ້ອມ.

ຍານພາຫະນະທຸກປະເພດທີ່ຂັບເຄື່ອນໄປ-ມາຕາມເສັ້ນທາງຕ້ອງມີປ້າຍທະບຽນ, ມີເອກະສານຄົບຖ້ວນຕິດໄປນຳ ແລະ ຕ້ອງມີປະກັນໄພຕາມມາດຕາ 17 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ.

ສຳລັບລົດໄຖນາເດີນຕາມທີ່ແກ່ລໍ້, ລົດຕຶອກໆ, ລົດພ່ວງຕ້ອງມີໄຟໜ້າ, ໄຟທ້າຍ ແລະ ຕິດແຜ່ນສະທ້ອນແສງໃສ່ທາງດ້ານໜ້າ ແລະ ດ້ານຫລັງ ຕາມລະບຽບການທີ່ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງວາງອອກ.

## ມາດຕາ 8. ຍານພາຫະນະທີ່ບໍ່ແລ່ນດ້ວຍເຄື່ອງຈັກ

ຍານພາຫະນະທີ່ບໍ່ແລ່ນດ້ວຍເຄື່ອງຈັກທຸກຊະນິດເຊັ່ນ: ລົດຖີບ, ກວຽນ, ລໍ້ ແລະ ອື່ນໆ ທີ່ລາກແກ່, ຊຸກ, ຍູ້ດ້ວຍຄົນ ຫລື ສັດ ໃນເວລາເຄື່ອນໄຫວຕາມເສັ້ນທາງຕ້ອງປະຕິບັດຕາມກົດລະບຽບການຈະລາຈອນຢ່າງເຂັ້ມງວດເຊັ່ນດຽວກັນ. ສຳລັບລົດຖີບສອງລໍ້ ຫລື ສາມລໍ້ຕ້ອງມີຫ້າມລໍ້, ໄຟຕາໜ້າ, ໄຟທ້າຍ ແລະ ຕ້ອງຕິດແຜ່ນສະທ້ອນແສງໃສ່ທາງໜ້າ, ທາງຫລັງ ແລະ ທາງຂ້າງ.

### ມາດຕາ 9. ສັດລ້ຽງ

ຫ້າມລ້ຽງ ຫລື ປ່ອຍສັດທຸກຊະນິດຕາມເສັ້ນທາງ. ການເຄື່ອນຍ້າຍສັດຕາມເສັ້ນທາງຈະຕ້ອງມີຜູ້ຄວບຄຸມ ແລະ ປະຕິບັດຕາມກົດລະບຽບການຈະລາຈອນ.

ໃນກໍລະນີເກີດອຸປະຕິເຫດຍ້ອນສັດລ້ຽງເຈົ້າຂອງ ຫລື ຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ສັດລ້ຽງຂອງຕົນໄດ້ກໍ່ຂຶ້ນຍ້ອນຄວາມຜິດຂອງເຈົ້າຂອງ ຫລື ຜູ້ຄອບຄອງສັດນັ້ນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນນອກສັນຍາ.

## ໝວດທີ III ຜູ້ຂັບຂີ່ຍານພາຫະນະ

### ມາດຕາ 10. ອາຍຸຂອງຜູ້ຂັບຂີ່ລົດ

- ຜູ້ຂັບຂີ່ລົດຖີບຕ້ອງມີອາຍຸບໍ່ຕໍ່າກວ່າ ສິບສອງປີ;
- ຜູ້ຂັບຂີ່ລົດຈັກຕ້ອງມີອາຍຸແຕ່ ສິບຫ້າປີຂຶ້ນໄປ. ສໍາລັບຜູ້ທີ່ມີອາຍຸແຕ່ ສິບຫ້າປີຂຶ້ນໄປແຕ່ບໍ່ເຖິງ ສິບແປດ ປີ ອະນຸຍາດໃຫ້ຂັບຂີ່ໄດ້ສະເພາະລົດຈັກຂະໜາດ 110 ເຊເຊລົງມາ;
- ຜູ້ຂັບຂີ່ລົດສາມລໍ້, ລົດໄຖນາເດີນຕາມ, ລົດຕ໊ອກໆ ແລະ ລົດສີ່ລໍ້ຂຶ້ນໄປ ທີ່ແລ່ນດ້ວຍເຄື່ອງຈັກຕ້ອງມີອາຍຸແຕ່ ສິບແປດ ປີຂຶ້ນໄປ;
- ຜູ້ຂັບຂີ່ລົດຂົນສົ່ງໂດຍສານຕ້ອງມີອາຍຸແຕ່ ຊາວຫ້າ ປີຂຶ້ນໄປ.

### ມາດຕາ 11. ໃບຂັບຂີ່

ຜູ້ຂັບຂີ່ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກຕ້ອງມີໃບຂັບຂີ່.

ການສອບເສັງ ແລະ ການອອກໃບຂັບຂີ່ນັ້ນ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມລະບຽບການທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ.

ຜູ້ທີ່ຈະໄດ້ໃບຂັບຂີ່ນັ້ນ ຕ້ອງໄດ້ຜ່ານການສອບເສັງ ຕາມຫລັກສູດການຮຽນ ການສອນຂັບລົດຢ່າງຄົບຖ້ວນ.

ໃບຂັບຂີ່ມີອາຍຸ ຫ້າ ປີ ແລະ ສາມາດຕໍ່ໄດ້ພາຍຫລັງໝົດອາຍຸແຕ່ລະຄັ້ງ. ຜູ້ສະເໜີຂໍຕໍ່ໃບຂັບຂີ່ຕ້ອງມີສຸຂະພາບສົມບູນ ໂດຍມີໃບຢັ້ງຢືນສຸຂະພາບຈາກແພດຢ່າງຖືກຕ້ອງ.

ຜູ້ຂັບຂີ່ຕ່າງປະເທດທີ່ປະຈໍາການຢູ່ ສ ປປ ລາວ ລວມທັງນັກການທູດ, ນັກຊ່ຽວຊານ, ພະນັກງານຂອງອົງການຈັດຕັ້ງສາກົນ ຕ້ອງໃຊ້ໃບຂັບຂີ່ຂອງ ສ ປປ ລາວ. ໃບຂັບຂີ່ທີ່ອອກໂດຍປະເທດອື່ນສາມາດປ່ຽນເອົາໃບຂັບຂີ່ຂອງ ສ ປປ ລາວໄດ້. ສໍາລັບຜູ້ຂັບຂີ່ຕ່າງປະເທດທີ່ເປັນພົນລະເມືອງຂອງບັນດາປະເທດພາຄີຂອງສົນທິສັນຍາ ຫລື ສັນຍາສາກົນກ່ຽວກັບການຮັບຮູ້ໃບຂັບຂີ່ເຊິ່ງກັນ ແລະ ກັນທີ່ ສ ປປ ລາວ ໄດ້ເຂົ້າຮ່ວມນັ້ນ ສາມາດນໍາໃຊ້ໃບຂັບຂີ່ຂອງຕົນໄດ້ໂດຍບໍ່ຕ້ອງປ່ຽນເອົາໃບຂັບຂີ່ຂອງ ສ ປປ ລາວ.

### ມາດຕາ 12. ເງື່ອນໄຂຂອງຜູ້ຂັບຂີ່

ຜູ້ຂັບຂີ່ຕ້ອງມີເງື່ອນໄຂດັ່ງນີ້:

- ມີໃບຂັບຂີ່ຖືກຕ້ອງຕາມລະບຽບການ;
- ມີສຸຂະພາບສົມບູນ;
- ປະຕິບັດຕາມກົດລະບຽບການຈະລາຈອນຢ່າງເຂັ້ມງວດ;
- ຂັບຂີ່ບໍ່ໃຫ້ເກີນກໍານົດເວລາທີ່ລະບຽບການວາງອອກ;
- ບໍ່ຂັບລົດໃນເວລາມຶນເມົາ ແລະ ບໍ່ເປັນຜູ້ເສບຢາເສບຕິດ.

### ມາດຕາ 13. ລະບຽບການຂັບຂີ່ ແລະ ການບັນທຸກ

ຜູ້ຂັບຂີ່ຍານພາຫະນະທຸກປະເພດຕ້ອງປະຕິບັດຕາມກົດລະບຽບການຈະລາຈອນຢ່າງເຂັ້ມງວດເຊັ່ນ:

- ສໍາລັບລົດຖີບ ອະນຸຍາດໃຫ້ຂີ່ໄດ້ບໍ່ເກີນ ສອງຄົນ;
- ສໍາລັບລົດຈັກ ອະນຸຍາດໃຫ້ຜູ້ໃຫຍ່ຊ້ອນໄດ້ຫນຶ່ງຄົນ ແລະ ເດັກນ້ອຍອີກຫນຶ່ງຄົນ ອາຍຸບໍ່ເກີນ ສິບເອັດປີ;
- ສໍາລັບລົດສາມລໍ້ຖີບ ແລະ ສາມລໍ້ລົດຈັກຕິດຂ້າງ ອະນຸຍາດໃຫ້ຂີ່ໄດ້ສາມຄົນລວມທັງຜູ້ຂັບ;
- ສໍາລັບລົດປະເພດສາມລໍ້ ແລະ ສີ່ລໍ້ຂຶ້ນໄປ ທີ່ແລ່ນດ້ວຍເຄື່ອງຈັກ ອະນຸຍາດໃຫ້ບັນທຸກໄດ້ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງກົດຫມາຍວ່າດ້ວຍການຂົນສົ່ງທາງບົກ ແລະ ລະບຽບການຂອງກະ ຊວງຄົມມະນາ ຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ;
- ຜູ້ຂີ່ລົດຈັກທຸກຄົນ ຕ້ອງໃສ່ຫມວກກັນກະທົບທີ່ໄດ້ມາດຕະຖານ;
- ຫ້າມຜູ້ຂັບຂີ່ລົດຈັກ ຫລື ລົດຖີບທຸກຊະນິດ ຂີ່ຮຽງກັນນັບແຕ່ສອງຄັນຂຶ້ນໄປ;
- ຫ້າມຂັບລົດໄວເກີນກໍານົດ;
- ຫ້າມຈອດລົດບ່ອນທີ່ມີເຄື່ອງຫມາຍຫ້າມຈອດ ແລະ ຕ້ອງຈອດລົດຢ່າງເປັນລະບຽບ;
- ຫ້າມບັນທຸກສິນຄ້າ ຫລື ຜູ້ໂດຍສານເກີນນໍ້າຫນັກ ຫລື ຈໍານວນທີ່ກໍານົດໄວ້;
- ຫ້າມຜູ້ຂັບຂີ່ລົດໃຊ້ ໂທລະສັບ ຫລື ເບິ່ງ ໂທລະພາບໃນເວລາຂັບຂີ່ລົດ;
- ຫ້າມບັນທຸກວັດຖຸອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 23 ຂອງກົດຫມາຍວ່າດ້ວຍການຂົນສົ່ງທາງບົກ.

ໃນກໍລະນີ ທີ່ພົບອຸປະຕິເຫດມີຄົນເຈັບ ຕ້ອງຊ່ວຍນໍາສົ່ງຄົນເຈັບໄປໂຮງຫມໍ ແລະ ແຈ້ງໃຫ້ເຈົ້າຫນ້າທີ່ຕໍາຫລວດຈະລາຈອນ ຫລື ຕໍາຫລວດທາງຫລວງຊາບ.

## ຫມວດທີ IV ການຄຸ້ມຄອງຍານພາຫະນະ

### ມາດຕາ 14. ການຂຶ້ນທະບຽນ ຍານພາຫະນະຂອງພົນລະເຮືອນ

ຍານພາຫະນະຂອງພົນລະເຮືອນທຸກປະເພດ ທີ່ແລ່ນດ້ວຍເຄື່ອງຈັກ ລວມທັງພາຫະນະກົນຈັກຫນັກເຊັ່ນ: ລົດດູດ, ລົດຈົກ, ລົດກວາດ, ລົດໄຖ ແລະ ກົນຈັກຫນັກຕ່າງໆ ຕ້ອງຂຶ້ນທະບຽນ ແລະ ມີປ້າຍທີ່ຖືກຕ້ອງຕາມລະບຽບການ ທີ່ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງວາງອອກ.

ມີແຕ່ອົງການຈັດຕັ້ງຂອງລັດທີ່ໄດ້ຮັບອະນຸຍາດເທົ່ານັ້ນ ຈຶ່ງສາມາດຜະລິດ ແລະ ອອກໃບຂັບຂີ່, ໃບທະບຽນ ແລະ ປ້າຍລົດໄດ້.

### ມາດຕາ 15. ການຂຶ້ນທະບຽນຍານພາຫະນະຂອງກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ

ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກຊຶ່ງຮັບໃຊ້ວຽກງານປ້ອງກັນຊາດ ຫລື ປ້ອງກັນຄວາມສະຫງົບ ໂດຍກົງແມ່ນຂຶ້ນທະບຽນ ແລະ ຕິດປ້າຍຢູ່ນຳ ກະຊວງປ້ອງກັນປະເທດ ຫລື ກະຊວງພາຍໃນ.

ສຳລັບຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກຊຶ່ງຮັບໃຊ້ວຽກງານບໍລິຫານ ແລະ ວຽກງານບໍລິການອື່ນໆ ຂອງກະຊວງປ້ອງກັນປະເທດ ຫລື ກະຊວງພາຍໃນ ຕ້ອງຂຶ້ນທະບຽນ ແລະ ຕິດປ້າຍຕາມລະບຽບ ການກ່ຽວກັບຍານພາຫະນະ ຂອງພົນລະເຮືອນ.

### ມາດຕາ16. ການນຳເຂົ້າຍານພາຫະນະ

ຍານພາຫະນະທຸກປະເພດ ທີ່ແລ່ນດ້ວຍເຄື່ອງຈັກ ຊຶ່ງນຳເຂົ້າເພື່ອຂຶ້ນທະບຽນນຳໃຊ້ຢ່າງຖາວອນ ຢູ່ ສ ປປ ລາວ ຕ້ອງມີໂຄງປະກອບສ້າງ ທີ່ຖືກຕາມມາດຕະຖານເຕັກນິກຂອງໂຮງງານທີ່ຜະລິດ, ຕ້ອງມີພວງມະໄລຊ້າຍ ແລະ ມີຄຸນນະພາບ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ໄດ້ກຳນົດໄວ້.

### ມາດຕາ 17. ການປະກອບ ແລະ ການດັດແປງຍານພາຫະນະ

ການປະກອບ ຫລື ການດັດແປງຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ຕ້ອງໄດ້ຕາມມາດຕະຖານທີ່ໂຮງງານກຳນົດໄວ້ ແລະ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງວາງອອກ.

### ມາດຕາ 18. ການສ້ອມແປງ ຍານພາຫະນະ

ການສ້ອມແປງຍານພາຫະນະຕ້ອງຮັບປະກັນຄວາມປອດໄພ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ.

### ມາດຕາ 19. ການກວດກາ ສະພາບເຕັກນິກຂອງຍານພາຫະນະ

ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກທຸກຊະນິດ ຕ້ອງໄດ້ຜ່ານການກວດກາດ້ານເຕັກນິກຕາມລະບຽບການ ທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ.

### ມາດຕາ 20. ການຍົກຍ້າຍ ພາຫະນະກົນຈັກຫນັກ

ການຍົກຍ້າຍພາຫະນະກົນຈັກຫນັກ ຕ້ອງໃຊ້ລົດລາກແກ່ ຫລື ລົດຂົນສົ່ງທີ່ຖືກຕ້ອງຕາມເຕັກນິກ ເພື່ອບັນທຸກໄປ.

## ໝວດທີ V ການຄຸ້ມຄອງຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ

### ມາດຕາ 21. ການຄຸ້ມຄອງຕຳຫລວດ ທາງຫລວງ ແລະ ຕຳຫລວດຈະລາຈອນ

ຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ ແມ່ນຂຶ້ນກັບການຄຸ້ມຄອງ ຂອງກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ກະຊວງພາຍໃນ.

### ມາດຕາ 22. ການຄຸ້ມຄອງຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ

ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງເປັນຜູ້ຄຸ້ມຄອງຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນໃນດ້ານຕ່າງໆ ດັ່ງນີ້:

1. ກໍ່ສ້າງ ແລະ ບຳລຸງທາງດ້ານການເມືອງ, ແນວຄິດ, ວິຊາການຈະລາຈອນ ແລະ ການຂົນສົ່ງທາງບົກ;

2. ສະເໜີຕໍ່ກະຊວງພາຍໃນກ່ຽວກັບການເລື່ອນຊັ້ນ, ຍົກຍ້າຍ, ຍ້ອງຍໍ ແລະ ປະຕິບັດວິໄນຕ່າງໆ;

3. ປະກອບພາຫະນະຮັບໃຊ້ທີ່ຈຳເປັນໃນການປະຕິບັດໜ້າທີ່;

4. ຂຶ້ນແຜນງົບປະມານການເງິນ, ການໃຊ້ຈ່າຍບໍລິຫານ, ເງິນເດືອນ, ເງິນບຳເນັດ ແລະ ການປະຕິບັດນະໂຍບາຍຕ່າງໆ;

5. ຊີ້ນຳ, ບັນຊາໂດຍກົງ ຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ ໃນການຈັດຕັ້ງປະຕິບັດໜ້າທີ່ກວດກາການຂົນສົ່ງ ແລະ ການຈະລາຈອນທາງບົກ ໃນຂອບເຂດທົ່ວປະເທດ.

### ມາດຕາ 23. ການຄຸ້ມຄອງຂອງກະຊວງພາຍໃນ

ກະຊວງພາຍໃນເປັນຜູ້ຄຸ້ມຄອງຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນທາງດ້ານຕ່າງໆ ດັ່ງນີ້:

1. ກໍ່ສ້າງ ແລະ ບຳລຸງທາງດ້ານວິຊາການຕຳຫລວດ;
2. ປະດັບຊັ້ນ, ເລື່ອນຊັ້ນ, ຍົກຍ້າຍ, ຍ້ອງຍໍ ແລະ ປະຕິບັດວິໄນຕ່າງໆ;
3. ປະກອບເຄື່ອງແບບ, ອາວຸດ ແລະ ອຸປະກອນທີ່ຈຳເປັນຕ່າງໆ;
4. ກຳນົດເງິນເດືອນ ແລະ ເງິນນະໂຍບາຍຕ່າງໆ.

## ໝວດທີ VI ການຄວບຄຸມ ການຈະລາຈອນ

### ມາດຕາ 24. ສິດ ແລະ ໜ້າທີ່ຂອງຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ

ຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນມີໜ້າທີ່ອຳນວຍຄວາມສະດວກ, ຄວບຄຸມການຈະລາຈອນ ແລະ ກວດກາການເຄົາລົບກົດໝາຍ ວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ, ກົດລະບຽບການຈະລາຈອນ

ແລະ ມີສິດກວດກາເອກະສານ ຂອງຍານພາຫະນະ ແລະ ຂອງຜູ້ຂັບຂີ່, ສຶກສາອົບຮົມ, ປັບໃໝຜູ້ລະເມີດ ແລະ ບັງຄັບໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ໄດ້ກ່າວໄວ້ຢູ່ຂ້າງເທິງນີ້.

ໃນກໍລະນີຈຳເປັນທີ່ໄດ້ກັກຄົນ, ຍຶດ ຫລື ກັກຍານພາຫະນະ ທີ່ລະເມີດກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ ແລະ ກົດລະບຽບການຈະລາຈອນ ເພື່ອທຳການດຳເນີນຄະດີຢູ່ນັ້ນ ເຈົ້າໜ້າທີ່ຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນ ຕ້ອງປົກປັກຮັກສາພາຫະນະ ແລະ ອຸປະກອນປະກອບ ຂອງຍານພາຫະນະນັ້ນໃຫ້ຢູ່ໃນສະພາບເດີມ. ຫ້າມນຳໃຊ້ຍານພາຫະນະທີ່ໄດ້ຍຶດ ຫລື ກັກ, ທຳລາຍຫລັກຖານ, ຍັກຍອກຂອງກາງ ຫລື ເຮັດໃຫ້ຍານພາຫະນະ ແລະ ອຸປະກອນປະກອບຂອງຍານພາຫະນະນັ້ນ ເປ່ເພ ຫລື ເສຍຫາຍຢ່າງເດັດຂາດ.

### ມາດຕາ 25. ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ

ເຈົ້າໜ້າທີ່ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນມີສິດ ແລະ ໜ້າທີ່ປະສານສົມທົບກັບເຈົ້າໜ້າທີ່ຕຳຫລວດທາງຫລວງ ແລະ ຕຳຫລວດຈະລາຈອນໃນການຄວບຄຸມ ແລະ ກວດກາການບັນທຸກນ້ຳໜັກ ຂອງລົດຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຕາມກົດໝາຍວ່າດ້ວຍ ການຈະລາຈອນທາງບົກ, ກົດໝາຍວ່າດ້ວຍ ການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ ແລະ ກົດລະບຽບການຈະລາຈອນ.

### ມາດຕາ 26. ການກວດກາ ແລະ ການແກ້ໄຂອຸປະຕິເຫດ

ໃນເມື່ອເກີດອຸຕິເຫດຢູ່ບ່ອນໃດບ່ອນໜຶ່ງ ຕ້ອງແມ່ນຕຳຫລວດຈະລາຈອນ ຫລື ຕຳຫລວດທາງຫລວງເປັນຜູ້ດຳເນີນການກວດກາ, ການບັນທຶກ, ການປະກອບເອກະສານສືບສວນ, ສອບສວນ ແລະ ປະກອບຂໍ້ມູນຫລັກຖານຕົວຈິງ ເພື່ອດຳເນີນຄະດີຕາມລະບຽບກົດໝາຍ.

ໃນກໍລະນີທີ່ຍານພາຫະນະຕິດຂັດເປ່ເພເສຍຫາຍຢູ່ຕາມເສັ້ນທາງ ຜູ້ຂັບຂີ່ຕ້ອງຮັບຜິດຊອບຕໍ່ການຍົກຍ້າຍອອກ ຈາກຊ່ອງທາງການຈະລາຈອນ.

### ມາດຕາ 27. ການກວດກາເອກະສານ ແລະ ກວດກາ ຜູ້ຂັບຂີ່

ເຈົ້າໜ້າທີ່ຄວບຄຸມການຈະລາຈອນມີສິດ ແລະ ໜ້າທີ່ກວດກາເອກະສານ ຂອງຍານພາຫະນະ ແລະ ຜູ້ຂັບຂີ່ຢູ່ຕາມເສັ້ນທາງ ຕາມຈຸດກວດຢູ່ເຂດຊຸມຊົນໃດໜຶ່ງທີ່ເໝາະສົມ.

ການດຳເນີນການກວດກາແຕ່ລະຄັ້ງ ຕ້ອງມີເຈົ້າໜ້າທີ່ຢ່າງໜ້ອຍ ສອງຄົນ ຂຶ້ນໄປ.

## ໝວດທີ VII ການຄຸ້ມຄອງ ການຈະລາຈອນທາງບົກ

### ມາດຕາ 28. ອົງການຄຸ້ມຄອງການຈະລາຈອນທາງບົກ

ອົງການຄຸ້ມຄອງການຈະລາຈອນທາງບົກປະກອບດ້ວຍ ສອງ ຂັ້ນດັ່ງນີ້:

- ຂັ້ນສູນກາງມີ: ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ແລະ ກະຊວງພາຍໃນ;

- ຂັ້ນທ້ອງຖິ່ນມີ: ພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ແລະ ຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເມືອງ.

### ມາດຕາ 29. ສິດ ແລະ ໜ້າທີ່ຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ

ໃນການຄຸ້ມຄອງການຈະລາຈອນທາງບົກ, ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ສ້າງແຜນການຍຸດທະສາດ ກ່ຽວກັບການພັດທະນາ ການຈະລາຈອນທາງບົກໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ເພື່ອນຳສະເໜີລັດຖະບານ;

2. ວາງລະບຽບການຄຸ້ມຄອງການຈະລາຈອນ ໃນຂອບເຂດທົ່ວປະເທດ, ຕິດຕາມກວດກາ ແລະ ປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ ແລະ ກົດລະບຽບການຈະລາຈອນໂດຍປະສານສົມທົບກັບກະຊວງພາຍໃນ;

3. ຄຸ້ມຄອງ, ກວດກາໃບທະບຽນລົດ, ປ້າຍລົດ ແລະ ໃບຂັບຂີ່ໃນຂອບເຂດທົ່ວປະເທດ;

4. ຄົ້ນຄ້ວາ ແລະ ວິໄຈສະຖິຕິອຸປະຕິເຫດ ແລະ ປະລິມານການສັນຈອນໃນຂອບເຂດທົ່ວປະເທດ;

5. ຮ່ວມມືກັບສາກົນ ແລະ ຊອກຫາແຫລ່ງທຶນເພື່ອພັດທະນາການຈະລາຈອນທາງບົກ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

### ມາດຕາ 30. ສິດ ແລະ ໜ້າທີ່ຂອງກະຊວງພາຍໃນ

ໃນການຄຸ້ມຄອງການຈະລາຈອນທາງບົກກະຊວງພາຍໃນມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຂຶ້ນແຜນງົບປະມານໃນການກໍ່ສ້າງ ແລະ ບຳລຸງຕຳຫລວດຈະລາຈອນ ແລະ ຕຳຫລວດທາງຫລວງ ທາງດ້ານວິຊາການຕຳຫລວດ;

2. ປະສານສົມທົບກັບກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງໃນການແກ້ໄຂບັນຫາຕ່າງໆກ່ຽວກັບການຄຸ້ມຄອງການຈະລາຈອນ, ໃນການວາງລະບຽບການກ່ຽວກັບການກວດ ກາ, ຄວບຄຸມ ການປະຕິບັດລະບຽບກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດຫມາຍວ່າດ້ວຍທາງຫລວງ ແລະ ກົດລະບຽບການຈະລາຈອນ ແລະ ສັງລວມສະຖິຕິອຸປະຕິເຫດຕາມເສັ້ນທາງ ໃນຂອບເຂດທົ່ວປະເທດ;

3. ຕິດຕາມກວດກາ ແລະ ປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດລະບຽບກົດຫມາຍທີ່ກ່າວມາຂ້າງເທິງນີ້;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບຫມາຍ ຂອງລັດຖະບານ.

### ມາດຕາ 31. ສິດ ແລະ ໜ້າທີ່ ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ

ໃນການຄຸ້ມຄອງການຈະລາຈອນທາງບົກ ພະແນກຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຜັນຂະຫຍາຍແຜນການຍຸດທະສາດ ແລະ ແຜນແມ່ບົດ ກ່ຽວກັບການພັດທະນາການຈະລາຈອນທາງບົກມາເປັນແຜນງານລະອຽດ ເພື່ອຈັດຕັ້ງປະຕິບັດ;

2. ຄຸ້ມຄອງການຈະລາຈອນທາງບົກຊຶ່ງປະກອບດ້ວຍວຽກຕົ້ນຕໍ ຄື:

- ຈັດສັນຄວາມເປັນລະບຽບໃນການຈະລາຈອນທາງບົກ;

- ຕິດຕັ້ງ ແລະ ຄຸ້ມຄອງປ້າຍ, ເຄື່ອງໝາຍການຈະລາຈອນທາງບົກ ເພື່ອເຮັດໃຫ້ການຈະລາຈອນມີຄວາມສະດວກ ແລະ ປອດໄພ;

- ສັງລວມສະຖິຕິອຸປະຕິເຫດ ແລະ ປະລິມານການສັນຈອນ;

- ຈັດຕັ້ງອົບຮົມ ແລະ ສອບເສັງໃບຂັບຂີ່;

- ກວດກາ ແລະ ອອກໃບເຕັກນິກລົດ;

- ອອກທະບຽນລົດ, ໃບຂັບຂີ່ ແລະ ປ້າຍລົດຕາມການມອບໝາຍ ຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ;

- ສຶກສາອົບຮົມ ໂຄສະນາເຜີຍແຜ່ລະບຽບກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ ແລະ ກົດລະບຽບການຈະລາຈອນ;

- ຄົ້ນຄວ້າປະກອບຄໍາເຫັນ ກ່ຽວກັບການຮ່າງກົດລະບຽບການຈະລາຈອນ ແລະ ສ້າງສະຖານທີ່ຈອດລົດຕ່າງໆ;

- ຄຸ້ມຄອງ ແລະ ຊີ້ນໍາໂດຍກົງຕໍາຫລວດທາງຫລວງ ແລະ ຕໍາຫລວດຈະລາຈອນ ໃນການຈັດຕັ້ງປະຕິບັດໜ້າທີ່ກວດກາການຂົນສົ່ງທາງບົກ ແລະ ການຈະລາຈອນໃນທ້ອງຖິ່ນຂອງຕົນ;

3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງ ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ.

### ມາດຕາ 32. ສິດ ແລະ ໜ້າທີ່ຂອງຫ້ອງການຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງເມືອງ

ໃນການຄຸ້ມຄອງການຈະລາຈອນທາງບົກ ຫ້ອງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງເມືອງມີສິດ ແລະ ໜ້າທີ່ດັ່ງນີ້:

1. ສຶກສາອົບຮົມ, ໂຄສະນາເຜີຍແຜ່ ລະບຽບກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ ແລະ ກົດລະບຽບການຈະລາຈອນ;

2. ປົກປັກຮັກສາລະບົບປ້າຍສັນຍານ, ເຄື່ອງໝາຍການຈະລາຈອນ;

3. ເຂົ້າຮ່ວມໃນການແກ້ໄຂອຸປະຕິເຫດ ທີ່ເກີດຂຶ້ນໃນຂອບເຂດເມືອງຂອງຕົນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ແຂວງ, ກໍາແພງນະຄອນ ແລະ ເຂດພິເສດ.

## ໝວດທີ VIII ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 33. ນະໂຍບາຍ ຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງທີ່ເຂົ້າຮ່ວມໃນການຄຸ້ມຄອງການຈະລາຈອນທາງບົກຢ່າງມີປະສິດທິຜົນ, ຮັບປະກັນຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ປົກປັກຮັກສາຄວາມສະອາດ, ສິ່ງແວດລ້ອມ, ລະບົບສັນຍານການຈະລາຈອນ, ຊັບສົມບັດຂອງລັດ ແລະ ບຸກຄົນຕາມເສັ້ນທາງໄດ້ດີ ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍຕາມຄວາມເຫມາະສົມ ຊຶ່ງລັດຖະບານເປັນຜູ້ກຳນົດລະອຽດ.

### ມາດຕາ34. ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດບົດບັນຍັດໃດໜຶ່ງຂອງກົດໝາຍ ສະບັບນີ້, ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ສາທາລະນະ, ຊີວິດ, ສຸຂະພາບ, ຊັບສິນຂອງຜູ້ອື່ນ, ຄວາມສະອາດ ຫລື ສິ່ງແວດລ້ອມ ຈະຖືກສຶກສາອົບຮົມ, ປັບໃໝ ຫລື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ໜັກ.

### ມາດຕາ 35. ມາດຕະການ ສຶກສາອົບຮົມ

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດບົດບັນຍັດໃດໜຶ່ງຂອງກົດໝາຍ ສະບັບນີ້ ໃນສະຖານເບົາເຊັ່ນ:

ລືມໃບຂັບຂີ່ ຫລື ເອກະສານລົດ, ເອກະສານລົດໝົດກຳນົດ, ເປິະເປື້ອນ, ປ້າຍລົດແຕກຫັກ, ອ່ານບໍ່ອອກ ຫລື ຕິດບໍ່ຖືກບ່ອນ ຈະຖືກສຶກສາອົບຮົມຕາມລະບຽບການ.

### ມາດຕາ 36. ມາດຕະການປັບໃໝ

ບຸກຄົນ ຫລື ການຈັດຕັ້ງຫາກໄດ້ລະເມີດບົດບັນຍັດໃດໜຶ່ງ ຂອງກົດໝາຍ ສະບັບນີ້ ເຊັ່ນ:

- ລະເມີດໄຟອຳນາດ;
- ລະເມີດປ້າຍສັນຍານ ການຈະລາຈອນ;
- ບໍ່ມີໃບຂັບຂີ່, ບໍ່ມີເອກະສານລົດ;
- ແລ່ນຜິດທາງ ທີ່ກຳນົດໄວ້;
- ຂັບລົດ ໃນສະພາບມຶນເມົາ;
- ແລ່ນລົດ ມີສຽງດັງເກີນມາດຕະຖານ;
- ໄຕ້ໄຟສູງບໍ່ຖືກຕາມລະບຽບການ;
- ບໍ່ໄຕ້ໄຟ ໃນຍາມກາງຄືນ;
- ໄຕ້ໄຟຕາດຽວ (ສຳຫລັບລົດສີ່ລໍ້ຂຶ້ນໄປ);
- ບໍ່ໄຕ້ໄຟໃນຍາມກາງເວັນ ເວລາສະພາບອາກາດມືດມົວເຊັ່ນ: ຝົນຕົກແຮງ ຫລື ໝອກລົງໜາ;

- ຄວັນດຳເກີນມາດຕະຖານ;
- ລົດບໍ່ມີຫ້າມລໍ້;
- ສ້າງຄວາມເປິະເປື້ອນ ແລະ ສິ່ງກີດຂວາງຕາມເສັ້ນທາງ;
- ບໍ່ມີແວ່ນສ່ອງຫລັງ;
- ບໍ່ໃສ່ໝວກກັນກະທົບທີ່ໄດ້ມາດຕະຖານໃນເວລາຂີ່ລົດຈັກ;
- ບັນທຸກເກີນກຳນົດ;

- ຍານພາຫະນະຂາດເຄື່ອງປະກອບຄົບຊຸດທີ່ຈຳເປັນ ທີ່ຢູ່ໃນສະພາບໃຊ້ງານໄດ້ຕາມມາດຕະຖານເຕັກນິກ ກ່ຽວກັບຄວາມປອດໄພ ແລະ ການລະເມີດກົດລະບຽບການຈະລາຈອນອື່ນໆ ຈະຖືກປັບໃໝ ຕາມລະບຽບການ:

ມອບໃຫ້ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງຄົ້ນຄວ້າຮ່າງລະບຽບການກ່ຽວກັບການລະເມີດ ແລະອັດຕາປັບໃໝເພື່ອນຳສະເໜີລັດຖະບານເປັນຜູ້ຕົກລົງ.

## ມາດຕາ 37. ມາດຕະການທາງອາຍາ

ບຸກຄົນໃດຫາກໄດ້ກະທຳຜິດ ທາງອາຍາເຊັ່ນ:
- ການກະທຳຜິດຕໍ່ຄວາມປອດໄພຂອງການຈະລາຈອນ;
- ປອມແປງໃບຂັບຂີ່, ເອກະສານ, ປ້າຍ, ເລກຈັກ ຫລື ເລກຖັງຂອງລົດ;
- ລັກ ຫລື ທຳລາຍປ້າຍ, ຫລັກໝາຍ, ເຄື່ອງໝາຍຈະລາຈອນ ຫລື ທຳລາຍທາງ;
- ມີການປະພຶດເປັນນັກເລງອັນທະພານໃນການຈະລາຈອນ;
- ລະເມີດກົດໝາຍ ວ່າດ້ວຍການຈະລາຈອນ ທາງບົກ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍທາງຫລວງ ຫລື ກົດລະບຽບການຈະລາຈອນ ພາໃຫ້ເກີດອຸປະຕິເຫດ ເຮັດໃຫ້ມີຜູ້ບາດເຈັບ, ເສຍອົງຄະ ຫລື ເສຍຊີວິດຈະຖືກລົງໂທດທາງອາຍາ.

## ມາດຕາ 38. ມາດຕະການໂທດເພີ້ມ

ນອກຈາກໂທດຕົ້ນຕໍ ທີ່ກຳນົດໄວ້ໃນມາດຕາ 35, ມາດຕາ 36 ແລະ ມາດຕາ 37 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດຍັງຈະໄດ້ຮັບໂທດເພີ້ມອີກເຊັ່ນ: ຖືກງົດ, ຖອນໃບອະນຸຍາດຕ່າງໆທີ່ກ່ຽວຂ້ອງກັບການຈະລາຈອນ, ຍຶດ ຫລື ຮິບພາຫະນະ ທີ່ໃຊ້ເຂົ້າໃນການກະທຳຜິດ.

# ໝວດທີ IX ບົດບັນຍັດສຸດທ້າຍ

## ມາດຕາ 39. ການຈັດຕັ້ງປະຕິບັດ

ມອບໃຫ້ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 40. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງເກົ້າສິບວັນ ນັບແຕ່ມື້ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ບັນດາຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 8 ເມສາ 2000

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ